ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ...67.../ນຍ
ນະຄອນຫຼວງວຽງຈັນ, ວັນທີ..03../..02../2017

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງສຶກສາທິການ ແລະ ກິລາ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016 ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ;
- ອີງຕາມ ໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1574/ສສກ.ຈຕ, ລົງວັນທີ 03 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 07/ພນ, ລົງວັນທີ 19 ມັງກອນ 2017.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງສຶກສາທິການ ແລະ ກິລາ ແນໃສ່ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາວຽກງານການສຶກສາ ແລະ ກິລາ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງສຶກສາທິການ ແລະ ກິລາ ຂຽນເປັນຕົວອັກສອນຫຍໍ້ວ່າ "ສສກ" ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກກ່ຽວກັບວຽກງານການສຶກສາ ແລະ ກິລາ ໃນຂອບເຂດທົ່ວປະເທດ, ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດຕາມສາມລັກສະນະ ແລະ ຫ້າຫຼັກມູນຂອງການສຶກສາແຫ່ງຊາດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານກ່ຽວກັບວຽກງານສຶກສາ ແລະ ກິລາ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳ ຂອງຂະແໜງສຶກສາທິການ ແລະ ກິລາ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ນິຕິກຳລຸ່ມກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການພັດທະນາການສຶກສາ ແລະ ກິລາ;
5. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການສຶກສາກ່ອນໄວຮຽນ ເພື່ອໃຫ້ເດັກໄດ້ຮັບການເບິ່ງແຍງດູແລທາງດ້ານໂພຊະນາການ ແລະ ສຸຂະພາບ ໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ ແລະ ມັນສະໝອງ ເພື່ອກຽມຄວາມພ້ອມເຂົ້າຮຽນໃນຊັ້ນປະຖົມສຶກສາ;
6. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການສຶກສາສາຍສາມັນ ເພື່ອພັດທະນາຜູ້ຮຽນໃຫ້ມີການຂະຫຍາຍຕົວຮອບດ້ານ ທັງດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ, ມີຄວາມຮູ້ພື້ນຖານ ທາງດ້ານວິທະຍາສາດທຳມະຊາດ-ສັງຄົມ ແລະ ວິຊາຊີບ;
7. ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ເພື່ອສ້າງ ແລະ ພັດທະນາຜູ້ຮຽນ ໃຫ້ມີວິຊາຊີບ, ວິຊາສະເພາະ ແລະ ເປັນນັກວິຊາການ, ນັກຄົ້ນຄວ້າວິທະຍາສາດ ແນໃສ່ຕອບສະໜອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
8. ຄຸ້ມຄອງບັນດາ ມະຫາວິທະຍາໄລ, ສະຖາບັນ ແລະ ສະຖານການສຶກສາ ຕາມລະບຽບການ;
9. ປະຕິບັດແຜນການສຶກສາພາກບັງຄັບ, ການລຶບລ້າງຄວາມບໍ່ຮູ້ໜັງສື, ການບຳລຸງຍົກລະດັບ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ກຸ່ມເປົ້າໝາຍຂອງການສຶກສານອກໂຮງຮຽນ ແລະ ຕິດພັນກັບການຮຽນຮູ້ຕະຫຼອດຊີວິດ;
10. ກໍ່ສ້າງ, ພັດທະນາ, ຊຸກຍູ້, ສົ່ງເສີມ, ປະສານງານ, ຕິດຕາມ ແລະ ປະເມີນຜົນ ວຽກງານການພັດທະນາຊັບພະຍາກອນມະນຸດຂອງບັນດາຂະແໜງການຕ່າງໆ ໃຫ້ໄປຕາມແຜນການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ;
11. ສ້າງ, ພັດທະນາຫຼັກສູດ, ອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ວຽກງານການສຶກສາ ແລະ ກິລາ;
12. ກຳນົດມາດຕະຖານຄຸນນະພາບການສຶກສາທຸກຊັ້ນ ແລະ ທຸກສາຍ ໃຫ້ເທົ່າທຽມກັບມາດຕະຖານຂອງພາກພື້ນ ແລະ ສາກົນ;
13. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ວຽກງານກິລາ-ກາຍຍະກຳລະດັບສູງ ໃນການສ້າງ ແລະ ພັດທະນານັກກິລາອາຊີບ ເພື່ອເຂົ້າຮ່ວມແຂ່ງຂັນໃນພາກພື້ນ ແລະ ສາກົນ;
14. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ວຽກງານກິລາ-ກາຍຍະກຳມວນຊົນ ໃຫ້ທົ່ວປວງຊົນມີຄວາມສົນໃຈໃນການຝຶກແອບ ແລະ ອອກກຳລັງກາຍ ໂດຍຕິດພັນກັບການດຳລົງຊີວິດ ເພື່ອເຮັດໃຫ້ມີສຸຂະພາບແຂງແຮງ;

15. ຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ການສຶກສາ ແລະ ກິລາ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງການພັດທະນາການສຶກສາ ແລະ ກິລາ ແຫ່ງຊາດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ;
16. ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານ, ການກຳນົດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງຂະແໜງການຕົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ;
17. ສ້າງແຜນບຳລຸງ, ກໍ່ສ້າງ, ສັບຊ້ອນ ພະນັກງານ-ລັດຖະກອນ ລວມທັງການສົ່ງເສີມບົດບາດຍິງ-ຊາຍ, ການປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂອງຂະແໜງສຶກສາທິການ ແລະ ກິລາ ຕາມລະບຽບການທີ່ກຳນົດໄວ້;
18. ຄຸ້ມຄອງ, ບໍລິຫານການເງິນ, ຊັບສິນ ແລະ ເອກະສານທາງລັດຖະການ ພ້ອມທັງຂຶ້ນແຜນງົບປະມານ, ສະຫຼຸບ ແລະ ລາຍງານ ເປັນແຕ່ລະໄລຍະ;
19. ພົວພັນ, ຮ່ວມມື, ປະສານງານ ແລະ ເປັນໃຈກາງ ໃນການແລກປ່ຽນບົດຮຽນ ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ພາກພື້ນ ກ່ຽວກັບວຽກງານການສຶກສາ ແລະ ກິລາ;
20. ຄຸ້ມຄອງ, ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ-ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບ, ກົດໝາຍ, ຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ລວມທັງນິຕິກຳທີ່ລັດຖະບານ ແລະ ກະຊວງສຶກສາທິການ ແລະ ກິລາ ວາງອອກແຕ່ລະໄລຍະ;
21. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

1. ສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ ນະໂຍບາຍ, ແຜນຍຸດທະສາດ, ດຳລັດ, ໂຄງການ ແລະ ແຜນພັດທະນາ ກ່ຽວກັບວຽກງານຂະແໜງສຶກສາທິການ ແລະ ກິລາ;
2. ສະເໜີຕໍ່ລັດຖະບານ ຈັດຕັ້ງການແຂ່ງຂັນດ້ານການສຶກສາ ແລະ ກິລາ ລະດັບຊາດ, ພາກພື້ນ ແລະ ສາກົນ;
3. ສະເໜີຕໍ່ລັດຖະບານ ປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນຂອງຂະແໜງສຶກສາທິການ ແລະ ກິລາ;
4. ອະນຸມັດ, ລຶບລ້າງ ຫຼື ສັ່ງໂຈະ ບັນດາຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານຂະແໜງສຶກສາທິການ ແລະ ກິລາ;
5. ອະນຸມັດ ແລະ ຮັບຮອງຫຼັກສູດການສຶກສາລະດັບຕ່າງໆ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດ;
6. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານການສຶກສາ ແລະ ກິລາ ບົນພື້ນຖານກົດໝາຍ, ຂໍ້ກຳນົດ ແລະ ລະບຽບການທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ;
7. ອະນຸມັດການແຂ່ງຂັນດ້ານການສຶກສາ ແລະ ກິລາ ພາຍໃນປະເທດ;
8. ກຳນົດກົງຈັກການຈັດຕັ້ງ ຂັ້ນກະຊວງ, ຂັ້ນແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ວິທະຍາໄລ, ສູນ, ໂຮງຮຽນ, ສະຫະພັນກິລາ ແລະ ຫົວໜ່ວຍການຜະລິດ ພ້ອມທັງກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງ;
9. ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນຢ່າງລະອຽດ;
10. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ຂອງຂະແໜງສຶກສາທິການ ແລະ ກິລາ ເຂົ້າຮ່ວມປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ;

11. ອະນຸມັດໃຫ້ຫ້ອງການ, ບັນດາກົມ, ສະຖາບັນ ຈັດກອງປະຊຸມ, ຝຶກອົບຮົມ ຫຼື ສຳມະນາທາງດ້ານວິຊາການ;
12. ສະເໜີແຜນງົບປະມານ, ສ້າງແຜນລາຍຮັບ-ລາຍຈ່າຍ ແລະ ດັດແກ້ງົບປະມານຂອງກະຊວງສຶກສາທິການ ແລະ ກິລາ;
13. ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານໃນຂະແໜງສຶກສາທິການ ແລະ ກິລາ ໃຫ້ໄປຕາມກົດໝາຍ ແລະ ລະບຽບການ;
14. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານການສຶກສາ ແລະ ກິລາ ແລະ ວຽກງານອື່ນໆ ຕາມການມອບໝາຍ ຫຼື ຕາມການຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
15. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງກະຊວງສຶກສາທິການ ແລະ ກິລາ ປະກອບດ້ວຍ:

1. ຫ້ອງການ;
2. ຫ້ອງການຄະນະພັກ;
3. ກົມຈັດຕັ້ງ ແລະ ພະນັກງານ;
4. ກົມກວດກາ;
5. ກົມການເງິນ;
6. ກົມແຜນການ;
7. ກົມພົວພັນຕ່າງປະເທດ;
8. ກົມການສຶກສາກ່ອນໄວຮຽນ;
9. ກົມສາມັນສຶກສາ;
10. ກົມອາຊີວະສຶກສາ;
11. ກົມການສຶກສາຊັ້ນສູງ;
12. ກົມການສຶກສານອກໂຮງຮຽນ;
13. ກົມສ້າງຄູ;
14. ກົມກິດຈະການນັກສຶກສາ;
15. ກົມພະລະ ແລະ ສິລະປະສຶກສາ;
16. ກົມກິລາລະດັບສູງ;
17. ກົມກິລາມວນຊົນ;
18. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ;
19. ສະຖາບັນພັດທະນາການບໍລິຫານການສຶກສາ;
20. ຫ້ອງການເລຂາທິການຄະນະກຳມາທິການແຫ່ງຊາດລາວ ເພື່ອຍູເນດສະໂກ;
21. ຫ້ອງການເລຂາທິການຄະນະກຳມະການໂອແລມປິກແຫ່ງຊາດລາວ.

ນອກຈາກນີ້, ຍັງມີມະຫາວິທະຍາໄລ, ວິທະຍາໄລ, ຫົວໜ່ວຍການຈັດຕັ້ງວິຊາການ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ.

**ກົງຈັກການຈັດຕັ້ງຂອງທ້ອງຖິ່ນທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ຂອງກະຊວງສຶກສາທິການ ແລະ ກິລາ ມີຄື:**

1. ຂັ້ນແຂວງ ມີ ພະແນກສຶກສາທິການ ແລະ ກິລາ;
2. ຂັ້ນເມືອງ ມີ ຫ້ອງການສຶກສາທິການ ແລະ ກິລາ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນຂອງກະຊວງສຶກສາທິການ ແລະ ກິລາ ປະກອບມີ:

**ກ. ຂັ້ນກະຊວງ**

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ໃນການຄຸ້ມຄອງມະຫາພາກຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

   ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີກະຊວງ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ.
2. ຮອງລັດຖະມົນຕີກະຊວງຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີກະຊວງເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີກະຊວງຕິດຂັດ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

**ຂ. ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ**

1. ຂັ້ນແຂວງ ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ;
2. ຂັ້ນເມືອງ ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກະຊວງສຶກສາທິການ ແລະ ກິລາ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;

3. ທຸກການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານການສຶກສາ ແລະ ກິລາ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດການລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງສຶກສາທິການ ແລະ ກິລາ ມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສະຖາບັນ, ຫ້ອງການເລຂາຄະນະກຳມາທິການ, ຫ້ອງການເລຂາຄະນະກຳມະການ, ບັນດາການຈັດຕັ້ງ ທີ່ຂຶ້ນກັບກະຊວງ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ ແລະ ກິລາ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ